# ກອບແຜນການວ່າຈ້າງ ຊ່ຽວຊານທີ່ປຶກສາຂັ້ນທ້ອງຖິ່ນ ເພື່ອສົ່ງເສີມ ໂຄງການກະສິກຳ ສະຫຼາດຂອງອົງການຈັດຕັ້ງຊຸມຊົນຢູ່ບ້ານເປົ້າໝາຍໂຄງການ
## (National Consultant on Climate-Smart Agriculture – CSA)

| | |
|---|---|
| **ໂຄງການ:** | ໂຄງການ ສົ່ງເສີມກະສິກຳທັນສະໄໝເພື່ອປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງດິນຟ້າອາກາດໃຫ້ແກ່ກຸ່ມຊາວກະສິກອນ ແມ່ຍິງ ແລະ ໄວໜຸ່ມຢູ່ ສ ປປ ລາວ (Promoting Climate Smart Agriculture to respond to climate adaptation and mitigation needs of vulnerable women and youth farmers' groups) |
| **ຜູ້ໃຫ້ທຶນ:** | **ສະຫະພາບເອີຣົບ ປະຈຳ ສປປ ລາວ** |
| **ອົງການດຳເນີນໂຄງການ:** | ອົງການ ອ໋ອສຟາມ ປະຈຳລາວ ຮ່ວມກັບ ສະມາຄົມຊ່ວຍເຫຼືອເຊິ່ງກັນແລະກັນ (AMA) ແລະ ສະມາຄົມພັດທະນາຊຸມຊົນສີຂຽວ (GCA) ພາຍໃຕ້ການສະໜັບສະໜູນດ້ານວິຊາການ ຈາກສະຖາບັນຄົ້ນຄວ້າ ແລະ ພັດທະນາກະສິກຳ ແລະ ປ່າໄມ້ (NAFRI) ແລະ ສະມາຊິກ CSO ອື່ນໆ ພາຍໃຕ້ໂຄງການ. |
| **ພື້ນທີ່ດຳເນີນການ:** | 15 ບ້ານ ຢູ່ ເມືອງຈອມເພັດ, ເມືອງພູຄູນ, ເມືອງນານ, ເມືອງຊຽງເງິນ ແຂວງຫຼວງພະບາງ ແລະ ເມືອງຈຳພອນ, ເມືອງເຊໂປນ ແລະ ເມືອງວິລະບູລີ, ແຂວງສະຫວັນນະເຂດ, ສປປ ລາວ |
| **Project Duration:** | 48 months (April 2024 - January 2028) |
| **ເລກລະຫັດໂຄງການ:** | NDICI CSO/2023/444-834 |
| **ເລກລະຫັດງົບປະມານ:** | Line Code: 52050600, line number: 5.4.2 |
| **ໄລຍະເວລາການວ່າຈ້າງ:** | 16 ເດືອນ ໃນປີທີ 3 – 4 ຂອງໂຄງການ, ສະເລ່ຍ 15 ວັນຕໍ່ເດືອນ ເລີ່ມໃນ ກາງເດືອນມີນາ 2026 ເຖິງເດືອນສິງຫາ 2027 |
| **ງົບປະມານສຳລັບວ່າຈ້າງ ຊ່ຽວຊານທີ່ປຶກສາ:** | ໂຄງການໃຊ້ ເພດງົບປະມານສຳລັບວ່າຈ້າງທີມງານຊ່ຽວຊານຄົນລາວ ເພດງົບປະມານໃນລະດັບທ້ອງຖິ່ນ ຢູ່ ແຂວງຫຼວງພະບາງ ແລະ ແຂວງສະຫວັນນະເຂດ, ຄ່າທີ່ປຶກສາ (ລວມຄ່າເດີນທາງ, ອັດຕາກິນ, ທີ່ພັກ ແລະ ອາກອນ/VAT) |
| **ປະກາດຮັບສະໝັກຊ່ຽວຊານ** | 29 ມັງກອນ 2026 ເຖິງວັນທີ 15 ກຸມພາ 2026, ແຈ້ງລາຍຊື່ເຂົ້າສຳພາດ ໃນ ອາທິດທີ 16 - 20 ກຸມພາ 2026, ສຳພາດ ລະຫວ່າງ ວັນທີ 25 - 27 ກຸມພາ 2026 |

## 1. ຄວາມເປັນມາ

ອີງຕາມແຜນຈັດຕັ້ງປະຕິບັດໂຄງການ ແລະ ອີງຕາມບົດບັນທຶກຄວາມເຂົ້າໃຈທີ່ໄດ້ຮັບອະນຸມັດໃນເດືອນ ເມສາ 2024 ລະຫວ່າງ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໂດຍຜ່ານການຮ່ວມມື ລະຫວ່າງ ສະຖາບັນຄົ້ນຄວ້າການກະສິກຳ ແລະ ປ່າໄມ້ແຫ່ງຊາດ – NAFRI ແລະ ອົງການ Oxfam Novib ໃນ ສປປ ລາວ, ໂຄງການ Climate-Smart Agriculture (CSA) (ອ້າງອີງໂຄງການເລກທີ NDICI CSO/2023/444-834) ໄດ້ຖືກຈັດຕັ້ງປະຕິບັດຂຶ້ນ ເພື່ອສົ່ງເສີມການເຕີບໂຕຂອງກະສິກຳທີ່ຄອບຄຸມ, ຍືນຍົງ ແລະ ສາມາດປັບຕົວຕໍ່ການປ່ຽນແປງດິນຟ້າອາກາດໃນ ສປປ ລາວ.

Oxfam ໃນ ສປປ ລາວ ເປັນອົງການນໍາພາການຈັດຕັ້ງປະຕິບັດ ໂຄງການ ແລະ ຮັບຜິດຊອບການປະສານງານທັງໝົດ, ຈັດການດ້ານການເງິນ ແລະ ສັນຍາ ພ້ອມທັງສ້າງຂີດຄວາມສາມາດໃນຄູ່ຮ່ວມງານ. ໂຄງການໄດ້ຮ່ວມຈັດຕັ້ງປະຕິບັດກັບ 2 ອົງການ ຫຼື (Co-applicants) ໄດ້ແກ່ ສະມາຄົມຊ່ວຍເຫຼືອເຊິ່ງກັນແລະກັນ (AMA) ແລະ ສະມາຄົມພັດທະນາຊຸມຊົນສີຂຽວ (GCA) ໂດຍມີ NAFRI ເປັນຜູ້ໃຫ້ການສະໜັບສະໜູນດ້ານເຕັກນິກວິຊາການ. AMA ເປັນສະມາຄົມທີ່ມີປະສົບການຍາວນານໃນການສົ່ງເສີມຊີວິດຄວາມເປັນຢູ່ໃນຊົນນະບົດ, ສ້າງຄວາມຍຸດຕິທໍາດ້ານດິນຟ້າອາກາດ, ສິດຂອງຊົນເຜົ່ານ້ອຍ ແລະ ຄວາມເທົ່າທຽມທາງເພດ. GCA ເປັນສະມາຄົມ ທີ່ສະໜັບສະໜູນບັນດາກຸ່ມຊາວນາ ແລະ ກຸ່ມຜະລິດກະສິກໍາຂັ້ນຊຸມຊົນ (CBOs) ໃນການຈັດການຊັບພະຍາກອນທໍາມະຊາດຢ່າງຍືນຍົງ ແລະ ການນໍາໃຊ້ເຕັກນິກ CSA.

ຈຸດປະສົງສະເພາະຂອງໂຄງການ ແມ່ນເພື່ອສົ່ງເສີມການຜະລິດ ແລະ ຜົນຜະລິດຂອງກະສິກໍາສະຫຼາດແບບປະສົມປະສານ ແລະ ມີສ່ວນຮ່ວມຂອງຊາວກະສິກອນຍິງ ແລະ ໄວໜຸ່ມ ໃນ 15 ບ້ານເປົ້າໝາຍ ຂອງແຂວງຫຼວງພະບາງ ແລະ ແຂວງສະຫວັນນະເຂດ. ບ້ານເຫຼົ່ານີ້ສ່ວນຫຼາຍ ປະກອບອາຊີບຊາວນາ ທີ່ມີຄວາມອ່ອນໄຫວສູງຕໍ່ໄພພິບັດທາງດິນຟ້າອາກາດ ເຊັ່ນ: ໄພແຫ້ງແລ້ງ, ນໍ້າຖ້ວມ, ຄວາມຜັນຜວນຂອງລະດູການຜະລິດ ແລະ ມີຂໍ້ຈໍາກັດທາງດ້ານວິຊາການໃນການເຮັດການກະສິກໍາສະຫຼາດ ເຊິ່ງໂຄງການ ສຸມໃສ່ 3 ເປົ້າໝາຍຫຼັກ ໄດ້ແກ່:

- ສ້າງຂີດຄວາມສາມາດດ້ານການບໍລິຫານກຸ່ມ, ເຕັກນິກວິຊາການ ແລະ ເຄືອຂ່າຍຂອງຊຸມຊົນກະສິກໍາສະຫຼາດ;
- ສ້າງຄວາມຫຼາກຫຼາຍດ້ານເຕັກນິກກະສິກໍາ, ການປູກຈໍາລອງ ແລະ ບົດຄົ້ນຄວ້າຈາກການເຮັດກະສິກໍາສະຫຼາດ ຫຼື ທັນສະໄໝ;
- ສ້າງຂີດຄວາມສາມາດໃຫ້ແກ່ຊາວນາທີ່ອ່ອນໄຫວ;

ວິທີການດໍາເນີນງານຫຼັກປະກອບມີ ການສ້າງຄວາມເຂັ້ມແຂງໃຫ້ຄູ່ຮ່ວມງານຂັ້ນບ້ານ, ສ້າງເຄືອຂ່າຍກຸ່ມຜະລິດກະສິກໍາຂັ້ນບ້ານ, ໃຫ້ການສະໜັບສະໜູນດ້ານການເງິນແກ່ກຸ່ມການຜະລິດ ເຊັ່ນ: ກຸ່ມຜະລິດໃນລະດັບຊຸມຊົນ ເພື່ອນໍາໃຊ້ເຕັກນິກ CSA ແບບປະສົມປະສານ (Mixed CSA Models) ເຂົ້າໃນການຜະລິດກະສິກໍາຂອງເຂົາເຈົ້າ ແລະ ການເນັ້ນໜັກແນວຄິດການປ່ຽນແປງທາງເພດ ແລະ ແນວຄິດເຟມີນິດ. ນອກນັ້ນ, ໂຄງການຍັງສົ່ງເສີມການຈັດຕັ້ງ ແລະ ສ້າງຂີດຄວາມສາມາດຂອງກຸ່ມການຜະລິດຂັ້ນຊຸມຊົນ (Community-Based Organisations – CBOs) ໃນ 15 ບ້ານເປົ້າໝາຍເພື່ອສ້າງກຸ່ມຜະລິດວາງແຜນເຮັດກະສິກໍາແບບ CSA, ວິທີຕິດຕາມກວດກາຜົນຜະລິດ CSA ແລະ ການພັດທະນາຫ່ວງໂສ້ມູນຄ່າເພີ່ມກະສິກໍາ. ດັ່ງນັ້ນ, ການວ່າຈ້າງທີ່ປຶກສາຄົນລາວ ໃນລະດັບທ້ອງຖິ່ນ ແມ່ນການໃຫ້ຄວາມຮູ້ດ້ານເຕັກນິກວິຊາການ , ນໍາພາເຮັດກິດຈະກໍາ ກະສິກໍາສະຫຼາດຂອງກຸ່ມຊາວກະສິກອນ, ເປັນພີ່ລ້ຽງ ແລະ ຕິດຕາມກວດກາກິດຈະກໍາພາກສະໜາມຢ່າງຕໍ່ເນື່ອງ ເພື່ອໃຫ້ການນໍາເອົາບົດຮຽນ CSA ໄປປະຕິບັດໃນ 15 ບ້ານ ໃຫ້ບັນລຸຜົນຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບເປົ້າໝາຍໂຄງການ ແລະ ຊຸມຊົນ ໃນຊ່ວງປີທີ 3–4 ຂອງໂຄງການ.

## 2. ຈຸດປະສົງຂອງການວ່າຈ້າງ

ຈຸດປະສົງຂອງການວ່າຈ້າງນີ້ ແມ່ນເພື່ອໃຫ້ການສະໜັບສະໜູນດ້ານເຕັກນິກ ແລະ ການພັດທະນາຂີດຄວາມສາມາດດ້ານ CSA ໃຫ້ແກ່ ກຸ່ມຜະລິດກະສິກໍາຂັ້ນຊຸມຊົນ CBOs ໃນແຂວງຫຼວງພະບາງ ແລະ ສະຫວັນນະເຂດ ໃນຊ່ວງການ ດໍາເນີນກິດຈະກໍາ ໃນປີ 2026-2027.

## 3. ຂອບເຂດວຽກງານ ແລະ ໜ້າທີ່ຫຼັກ

### 3.1. ການໃຫ້ຄໍາແນະນໍາ ແລະ ນໍາພາດ້ານເຕັກນິກ

- ໃຫ້ຄໍາແນະນໍາດ້ານ CSA ທີ່ເໝາະສົມກັບສະພາບພູມສັນຖານ, ລະບົບນິເວດ ແລະ ການຜະລິດກະສິກໍາໃນພື້ນທີ່ 15 ບ້ານເປົ້າໝາຍ.
- ເປັນພີ່ລ້ຽງ, ເປັນທີ່ປຶກສາ ໃຫ້ກັບ ຊຸມຊົນ ແລະ ປະສານງານກັບ ພະນັກງານ AMA, CSOs, ອົງການ Oxfam ແລະ CBOs ໃນການນໍາບົດຮຽນ CSA ເຂົ້າໃນການວາງແຜນການດໍາເນີນກິດຈະກໍາ ແລະ ການຕິດຕາມ.
- ສົ່ງເສີມ CSA ທີ່ຕິດພັນກັບບົດບາດ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ (gender-responsive) ແລະ ມີການຄໍານຶງເຖິງວຽກງານດູແລເບິ່ງແຍງໃນຄົວເຮືອນ (care economy) ຂອງແມ່ຍິງ.

**ເຕັກນິກ CSA ທີ່ຈະໄດ້ຮັບການສົ່ງເສີມ (ຕາມຄວາມເໝາະສົມຂອງແຕ່ລະພື້ນທີ່):**

- ການປັບປຸງຄຸນນະພາບດິນ: ການໃຊ້ຝຸ່ນອິນຊີ, ຝຸ່ນປຸງແຕ່ງໃນລະດັບທ້ອງຖິ່ນ (ຝຸ່ນຂຽວ, ຝຸ່ນບົ່ມ ແລະ ອື່ນໆ), ການປູກພືດຄຸມໜ້າດິນ (cover crops), ການຫຼຸດການໄຖດິນ.
- ການອະນຸລັກດິນ ແລະ ນໍ້າ: ການເຮັດຄັນດິນຕາມເສັ້ນລະດັບ, ໜອງກັກນໍ້າ, ລະບົບນໍ້າຢອດ, ການເກັບນໍ້າຝົນ, ການບໍລິຫານນໍ້າຢ່າງປະຫຍັດ.
- ການປູກພືດຫຼາກຫຼາຍ ແລະ ປູກພືດປະສົມ: ການປູກພືດສະຫຼັບຊະນິດ, ການປູກພືດຮ່ວມ, ການປູກພືດຕ້ານພະຍາດ ແລະ ພືດທົນແຫ້ງ.
- ການຈັດການສັດຕູພືດແບບຜະສົມ (IPM): ການໃຊ້ນໍ້າໝັກຊີວະພາບ, ນໍ້າສະກັດສົດຈາກພືດ, ການຫຼຸດການໃຊ້ສານເຄມີ.
- ການປູກພືດຮ່ວມກັບການອະນຸລັກປ່າໄມ້ (Agroforestry): ການປູກໄມ້ຢືນຕົ້ນ, ໄມ້ໃຫ້ໝາກ, ໄມ້ເຊື້ອໄຟ ຮ່ວມກັບພືດກະສິກໍາ.
- ການຫຼຸດການປ່ອຍອາຍເຮືອນແກ້ວ: ການບໍລິຫານເຟືອງແບບບໍ່ເຜົາ, ການຈັດການທົ່ງນາແບບ AWD, ການໃຊ້ພະລັງງານທົດແທນຂະໜາດນ້ອຍ.
- ການເຊື່ອມ CSA ກັບຫ່ວງໂສ້ມູນຄ່າເພີ່ມ: ການປັບປຸງວິທະຍາການຫຼັງການເກັບກ່ຽວ, ການແປຮູບ, ການຮັບຮອງມາດຕະຖານ ແລະ ການເຂົ້າເຖິງຕະຫຼາດ.
- ສ້າງສູນຮຽນຮູ້ຂັ້ນຊຸມຊົນ ເພື່ອເຜີຍແຜ່ຜົນການເຮັດກິດຈະກໍາໂຄງການ ແລະ ການທົດລອງຂອງຊຸມຊົນ ໃນແຕ່ລະບ້ານ.

### 3.2. ການຝຶກອົບຮົມ, ການເປັນພີ່ລ້ຽງ (Coaching) ແລະ Training of Trainers (ToTs)

- ອອກແບບວິທີການຝຶກ ແລະ/ຫຼື ປັບປຸງຫຼັກສູດຝຶກອົບຮົມ CSA (ທີ່ມີ) ໃຫ້ສອດຄ່ອງກັບບໍລິບົດທ້ອງຖິ່ນ, ກຸ່ມເປົ້າໝາຍ (ແມ່ຍິງ, ໄວໜຸ່ມ) ແລະ ກິດຈະກໍາ ທີ່ກ່ຽວຂ້ອງ.
- ຈັດຝຶກໃຫ້ແກ່ຜູ້ນໍາຊຸມຊົນ ຜູ້ນໍາກຸ່ມ CBO ໂດຍການມີສ່ວນຮ່ວມຈາກ AMA, GCA, CSOs, CBOs ໂດຍເນັ້ນວິທີການຮຽນຮູ້ແບບມີສ່ວນຮ່ວມ (participatory and adult learning approaches).

- ສະໜັບສະໜູນການຮຽນຮູ້ຜ່ານ Farmer Field Schools (FFS), ການສາທິດໃນແປງຕົວຢ່າງ ແລະ ການຮຽນຮູ້ຈາກການປະຕິບັດຈິງ, ນໍາພາ ແລະ ໃຫ້ການປຶກສາເຖິງທີ່ ຢ່າງມີສ່ວນຮ່ວມກັບ ຊາວກະສິກອນ ແມ່ຍິງ ແລະ ໄວໜຸ່ມ.
- ດໍາເນີນການ on-the-job coaching ໃຫ້ແກ່ CBOs ແລະ ກຸ່ມຊາວນາ ໃນການນໍາໃຊ້ເຕັກນິກ CSA, ການແກ້ໄຂບັນຫາໜ້າງານ ແລະ ການຕັດສິນໃຈດ້ານການຜະລິດ.
- ຈັດໃຫ້ມີການ coaching ເປັນຮອບ (regular coaching sessions) ແລະ ການຕິດຕາມຜົນການນໍາໃຊ້ຫຼັງການຝຶກ.

### 3.3. ການຕິດຕາມ, ການກວດກາ, ການແບ່ງປັນຄວາມຮູ້ ແລະ ການບັນທຶກຂໍ້ມູນ:

- ວາງແຜນ ແລະ ດໍາເນີນການຕິດຕາມພາກສະໜາມຢ່າງສະໜໍ່າສະເໝີ ໃນ 15 ບ້ານເປົ້າໝາຍ ເພື່ອປະເມີນການນໍາໃຊ້ CSA, ຄຸນນະພາບຂອງກິດຈະກໍາ CSA pilots ແລະ ຄວາມຄືບໜ້າຂອງ ກິດຈະກໍາ ແປຮູບ value chains.
- ໃຊ້ເຄື່ອງມືການຕິດຕາມທີ່ງ່າຍ ແລະ ເໝາະສົມ (checklists, field observation forms, photo records, farmer logbooks) ຮ່ວມກັບ AMA ແລະ CSOs.
- ຊ່ວຍ CBOs ແລະ ກຸ່ມຊາວນາ ໃນການບັນທຶກຂໍ້ມູນພື້ນຖານ ເຊັ່ນ ພື້ນທີ່ປູກ, ປະເພດພືດ, ຜົນຜະລິດ, ຕົ້ນທຶນ, ການໃຊ້ນໍ້າ ແລະ ການປ່ຽນແປງທີ່ກ່ຽວຂ້ອງກັບ CSA.
- ວິເຄາະຂໍ້ມູນການຕິດຕາມ ເພື່ອລະບຸບັນຫາ, ຄວາມສ່ຽງ, ບົດຮຽນຮູ້ ແລະ ຂໍ້ແນະນໍາໃນການປັບປຸງ.
- ຈັດທໍາບົດບັນທຶກ, ກໍລະນີສຶກສາ, ແລະ ບົດຮຽນຮູ້ຈາກການນໍາ CSA ໄປປະຕິບັດ ເພື່ອນໍາໃຊ້ໃນການລາຍງານ
- ສະໜອງຂໍ້ມູນທາງເຕັກນິກເຂົ້າໃນບົດລາຍງານຄວາມຄືບໜ້າ ແລະ ບັນທຶກບົດຮຽນຮູ້, ກໍລະນີສຶກສາ ແລະ ແນວປະຕິບັດທີ່ດີ.

## 4. ຜົນງານທີ່ຄາດຫວັງ

1) ຊຸມຊົນໄດ້ຮັບຄໍາປຶກສາ ແລະ ນໍາພາ CSA ເປັນຕົວແບບ ແລະ ການເພີ່ມມູນຄ່າການຜະລິດ ຈາກຊ່ຽວຊານທີ່ປຶກສາລະດັບທ້ອງຖິ່ນ ເຂົ້າເຖິງຊຸມຊົນຢູ່ 8 ບ້ານ ໃນ ແຂວງຫຼວງພະບາງ ແລະ 7 ບ້ານ ໃນ ແຂວງສະຫວັນນະເຂດ.
2) ແຜນການດໍາເນີນວຽກໄລຍະຍາວ 18 ເດືອນ (Inception Note).
3) ການຝຶກ ToTs ແລະ ທີ່ປຶກສາທາງເຕັກນິກ ໃຫ້ແກ່ກຸ່ມເປົ້າໝາຍໃນພື້ນທີ່.
4) ບົດລາຍງານການຕິດຕາມພາກສະໜາມ ເດືອນລະຄັ້ງ ເປັນສະເພາະບ້ານ.
5) ບົດລາຍງານສະຫຼຸບເປັນແຕ່ລະບ້ານ ແລະ ບົດລາຍງານລວມ ສຸດທ້າຍ.

## 5. ການລາຍງານ ແລະ ການປະສານງານ

ທີ່ປຶກສາຈະລາຍງານຕໍ່ຜູ້ຈັດການໂຄງການຂອງ AMA ແລະ ປະສານງານໃກ້ຊິດກັບ CSOs ແລະ ພາກສ່ວນກ່ຽວຂ້ອງ.

## 6. ຄຸນສົມບັດຂອງທີ່ປຶກສາ

1) ຈົບການສຶກສາດ້ານການກະສິກຳ, ສິ່ງແວດລ້ອມ ຫຼື ສາຂາທີ່ກ່ຽວຂ້ອງ.
2) ມີປະສົບການຢ່າງນ້ອຍ 4-5 ປີ ໃນວຽກງານສົ່ງເສີມການຜະລິດກະສິກຳ ສະຫຼາດ ຫຼື ກະສິກຳທັນສະໄໝ.
3) ມີປະສົບການຝຶກອົບຮົມ ແລະ ToTs ແລະ ນຳພາເຮັດວຽກໂຕຈິງກັບຊຸມຊົນ.
4) ເຂົ້າໃຈບໍລິບົດການກະສິກຳໃນ ສປປ ລາວ ແລະ ພື້ນທີ່ທັງພາກເໜືອ ແລະ ພາກໃຕ້
5) ມີທັກສະການສື່ສານ ແລະ ການລາຍງານທີ່ດີ ແລະ ມີທີມງານ

## 7. ຂັ້ນຕອນການສະໝັກ

ຜູ້ສົນໃຈກະລຸນາສົ່ງ: - ແຜນການດຳເນີນວຽກ (Technical Proposal) - ແຜນງົບປະມານ (Financial Proposal) – CV ຜູ້ຮັບຜິດຊອບຫຼັກ ແລະ ທີມງານ (ຖ້າມີ) ລວມທັງ CV ຂອງທີມງານ) ແລະ ເອກະສານອ້າງອີງ ປະສົບການອື່ນໆທີ່ກ່ຽວຂ້ອງ.

**ລາຍລະອຽດສາມາດເບິ່ງໄດ້ທີ່:**

https://drive.google.com/drive/folders/14hSVH6TB5eyVvJXaUnsjKkZkddy3L11E?usp=drive_link

**ສົ່ງໃບສະໝັກຜ່ານລິ້ງຮັບເອກະສານ:** https://forms.gle/mBBfBfgxsw1pTQcB6

**ສອບຖາມຂໍ້ມູນເພີ່ມເຕີມ:**

ນາງ ອອນນິດາ ແສນຄຳຕີ, ໂທ 020 5285 1385, ອີເມລ: *onnida.senkhamty@oxfam.org*